# ແກມຊິວ (GAMCIL)

**ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສິຂອງ ໃນ ສປປ ລາວ**

## ກອງປະຊຸມປຶກສາຫາລືບົດບັນທຶກຄວາມເຂົ້າໃຈຂອງໂຄງການ ຄັ້ງທີ 1

ກອງປະຊຸມປຶກສາຫາລືກ່ຽວກັບ ບົດບັນທຶກຄວາມເຂົ້າໃຈ ຄັ້ງທີ 1 ຂອງໂຄງການ ແກມຊິວ ໄດ້ຈັດຂຶ້ນໃນວັນທີ 10 ກຸມພາ 2023 ທີ່ ນະຄອນຫຼວງວຽງຈັນ ໂດຍມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມ ລວມທັງຜູ້ໄດ້ຮັບຜົນປະໂຫຍດຈາກ 3 ແຂວງເປົ້າໝາຍຄື ແຂວງ ຫຼວງພະບາງ, ແຂວງຈຳປາສັກ ແລະ ນະຄອນຫຼວງວຽງຈັນ. ພາຍໃນກອງປະຊຸມໄດ້ມີການປຶກສາຫາລືລາຍລະອຽດຂອງບົດບັນທຶກຄວາມເຂົ້າໃຈ ລວມທັງພື້ນທີ່ເປົ້າໝາຍ, ງົບປະມານ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການຄຸ້ມຄອງການປະຕິບັດຂອງໂຄງການ. ກອງປະຊຸມໃນຄັ້ງນີ້ ໄດ້ຊີ້ແຈງໃຫ້ເຫັນບັນດາຂົງເຂດໃນການປັບປຸງ ກ່ອນຈະສົ່ງໃຫ້ກົມສື່ສານມວນຊົນ ໄດ້ປະກອບຄຳເຫັນເພີ່ມຕື່ມ.



ກອງປະຊຸມປຶກສາຫາລືບົດບັນທຶກຄວາມເຂົ້າໃຈຂອງໂຄງການ ຄັ້ງທີ 1



ການປະເມີນຄວາມອາດສາມາດແບບມີສ່ວນຮ່ວມຂອງອົງການຈັດຕັ້ງ

## ການປະເມີນຄວາມອາດສາມາດແບບມີສ່ວນຮ່ວມຂອງອົງການຈັດຕັ້ງ

ການປະເມີນຄວາມອາດສາມາດແບບມີສ່ວນຮ່ວມໄດ້ຈັດຂຶ້ນໃນວັນທີ 4 ເມສາ 2023 ທີ່ ນະຄອນຫຼວງວຽງຈັນ ເພື່ອກຳນົດວິທີການ ທີ່ອົງການແຄຣ໌ ສາມາດສະໜັບສະໜູນ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ພາຍໃຕ້ການຮ່ວມມື ໂດຍຜ່ານໂຄງການ ແກມຊິວ ໂດຍສະເພາະ, ສະໜອງການຝຶກອົບຮົມ ເພື່ອປັບປຸງຂົງເຂດທີ່ໄດ້ກຳນົດໄວ້, ໂດຍສະເພາະແມ່ນ ທາງດ້ານບໍລິຫານ ແລະ ການຄົມມະນາຄົມ, ດ້ານບຸກຄະລະກອນ, ວຽກງານການປົກປ້ອງ, ລະບົບທາງດ້ານການເງິນ ແລະ ວຽກງານຄວາມສະເໝີພາບທາງເພດ.

## ກອງປະຊຸມປຶກສາຫາລືບົດບັນທຶກຄວາມເຂົ້າໃຈຂອງໂຄງການ ຄັ້ງທີ 2

ກອງປະຊຸມປຶກສາຫາລື ບົດບັນທຶກຄວາມເຂົ້າໃຈຂອງໂຄງການ ແກມຊິວ ຄັ້ງທີ 2 ໄດ້ຈັດຂຶ້ນໃນວັນທີ 3 ພຶດສະພາ 2023 ທີ່ ນະຄອນຫຼວງວຽງຈັນ ເພື່ອທົບທວນບົດບັນທຶກຄວາມເຂົ້າໃຈ ຮ່ວມກັບກົມແຜນການ ແລະ ການຮ່ວມມື ແລະ ກະຊວງການຕ່າງປະເທດ ໂດຍອີງໃສ່ຄຳເຫັນຈາກກອງປະຊຸມປຶກສາຫາລືໃນຄັ້ງທຳອິດ. ເຊິ່ງບົດບັນທຶກສະບັບສຸດທ້າຍຈະຖືກປັບປຸງໃຫ້ຖືກຕ້ອງ ແລະ ຄົບຖ້ວນຫຼາຍຂຶ້ນກວ່າເກົ່າ.



ກອງປະຊຸມປຶກສາຫາລື ບົດບັນທຶກຄວາມເຂົ້າໃຈ ຂອງໂຄງການ ແກມຊິວ ຄັ້ງທີ 2




ພິທີເຊັນບົດບັນທຶກຄວາມເຂົ້າໃຈ ໂຄງການ ແກມຊິວ

## ພິທີ ເຊັນບົດບັນທຶກຄວາມເຂົ້າໃຈ

ພິທີເຊັນບົດບັນທຶກຄວາມເຂົ້າໃຈ ໂຄງການ ແກມຊິວໄດ້ຈັດຂຶ້ນໃນວັນທີ 14 ກັນຍາ 2023 ທີ່ນະຄອນຫຼວງວຽງຈັນ. ເຂົ້າຮ່ວມໂດຍ ທ່ານ ຫົວໜ້າກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອຳນວຍການ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ, ປະທານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈຳ ສປປ ລາວ. ໂຄງການດັ່ງກ່າວ ແມ່ນຈະຊ່ວຍປັບປຸງທັກສະວິຊາຊີບໃນການນຳໃຊ້ດິຈິຕອນ ແລະ ເຕັກໂນໂລຊີໃໝ່ ແລະ ລາຍງານບັນຫາກ່ຽວກັບການພັດທະນາສີຂຽວ ໃຫ້ແກ່ສື່ມວນຊົນລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ.

## ກອງປະຊຸມຜູ້ປະສານງານໂຄງການ

ກອງປະຊຸມຜູ້ປະສານງານໂຄງການ ແມ່ນໄດ້ຈັດຂຶ້ນເປັນທາງການຄັ້ງທຳອິດທີ່ໂຮງແຮມ ແກຣນ ວຽງຈັນ ທີ 18 ທັນວາ 2023. ພາຍໃນກອງປະຊຸມໄດ້ສົນທະນາກ່ຽວກັບ ການນຳໃຊ້ສື່ສັງຄົມໃນລາວ ໂດຍສະເພາະນັກຂ່າວ ແລະ ສື່ຕ່າງໆ ໃຫ້ໃຊ້ສື່ສັງຄົມຢ່າງຖືກຕ້ອງ. ສະມາຄົມນັກຂ່າວແຫ່ງ ສປປ ລາວ ຈະໄດ້ດຳເນີນການວິເຄາະທາງດ້ານສື່ມວນຊົນ ເພື່ອກຳນົດວິທີການທີ່ດີທີ່ສຸດທີ່ຈະເຂົ້າເຖິງກຸ່ມເປົ້າໝາຍ ແລະ ກຸ່ມຄົນທົ່ວໄປທີ່ນຳໃຊ້ສື່ສັງຄົມອອນລາຍ ເຊິ່ງຈະຊ່ວຍໃຫ້ພວກເຮົາສາມາດແກ້ໄຂບັນຫານີ້ເປັນສ່ວນໜຶ່ງຂອງວຽກງານຂອງພວກເຮົາໃນຄັ້ງຕໍ່ໄປ.



ກອງປະຊຸມຜູ້ປະສານງານໂຄງການ

## ການປະຖົມນິເທດ ວຽກງານສື່ສານ

ວັນທີ 15 ກຸມພາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ໄດ້ພົບປະກັນ ເພື່ອປະຖົມນິເທດ ວຽກງານສື່ສານ ທີ່ ຫ້ອງການສະມາຄົມນັກຂ່າວລາວ, ນະຄອນຫຼວງວຽງຈັນ. ພາຍໃນການປະຖົມນິເທດ ແມ່ນໄດ້ມີການສົນທະນາກ່ຽວກັບນະໂຍບາຍສື່ສັງຄົມອອນລາຍຂອງ ອົງການແຄຣ໌, ຮູບແບບຂອງ ອົງການແຄຣ໌, ການນຳໃຊ້ແບບຟອມການຍິນຍອມ, ຄວາມຕ້ອງການດ້ານສື່ສານຂອງສະຫະພາບເອີຣົບ. ທັງນີ້ ກໍເພື່ອໃຫ້ໝັ້ນໃຈວ່າ ຄູ່ຮ່ວມງານຈະໄດ້ຮັບຂໍ້ມູນກ່ຽວກັບວຽກງານສື່ສານ, ເຂົ້າໃຈໃນນະໂຍບາຍຂອງອົງການແຄຣ໌ ແລະ ສາມາດນຳເອົາໄປປັບໃຊ້ໃຫ້ມີຄວາມເໝາະສົມກັບໂຄງການຫຼາຍຂຶ້ນ.



ການປະຖົມນິເທດ ວຽກງານສື່ສານ



ປະຖົມນິເທດ ວຽກຈັດຊື້ ແລະ ຂັ້ນຕອນການດຳເນີນ

## ການປະຖົມນິເທດ ວຽກງານຈັດຊື້

ໃນວັນທີ 15 ກຸມພາ 2024, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດການປະຖົມນິເທດ ການຈັດຊື້ ແລະ ຂັ້ນຕອນການດຳເນີນງານ ໃຫ້ແກ່ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ. ຈຸດປະສົງແມ່ນເພື່ອຊ່ວຍໃຫ້ເຂົາເຈົ້າ ໄດ້ເຂົ້າໃຈນະໂຍບາຍການຈັດຊື້ ແລະ ຂັ້ນຕອນການດຳເນີນຕ່າງໆ. ນອກຈາກນັ້ນ, ພວກເຮົາຍັງໄດ້ມີການແລກປ່ຽນບົດຮຽນກ່ຽວກັບແຜນການຈັດຊື້, ລວມໄປເຖິງທິດທາງໃນຕໍ່ໜ້າຂອງຂະບວນການຈັດຊື້ທີ່ຈະຕ້ອງໄດ້ດຳເນີນການ ເພື່ອໃຫ້ໝັ້ນໃຈວ່າ ທາງຄູ່ຮ່ວມງານຈະສາມາດວາງແຜນການຈັດຊື້ ແລະ ດຳເນີນການຈັດຕັ້ງປະຕິບັດໄດ້ຢ່າງຖືກຕ້ອງ, ທັນກັບເວລາ ແລະ ມີປະສິດຕິພາບຫຼາຍຂຶ້ນ.

## ການປະຖົມນິເທດ ວຽກງານການເງິນ

ວັນທີ 22 ກຸມພາ 2024, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດປະຖົມນິເທດກ່ຽວກັບນະໂຍບາຍການເງິນ, ການລາຍງານ ທາງດ້ານການເງິນ ແລະ ນະໂຍບາຍການຮັບຮູ້ ກ່ຽວກັບຂໍ້ຈຳກັດດ້ານການເງິນໃຫ້ແກ່ສະມາຄົມນັກຂ່າວ ແຫ່ງ ສປປ ລາວ. ຈຸດປະສົງແມ່ນເພື່ອສ້າງຄວາມເຂົ້າໃຈກ່ຽວກັບນະໂຍບາຍທາງດ້ານການເງິນຂອງໂຄງການ, ເພີ່ມທະວີການສ້າງຄວາມເຂັ້ມແຂງທາງດ້ານການເງິນໃຫ້ແກ່ຄູ່ຮ່ວມງານ ແລະ ທີມງານໂຄງການເພື່ອໃຫ້ໝັ້ນໃຈວ່າ ຄູ່ຮ່ວມງານ ແລະ ທີມງານໂຄງການຈະສາມາດວາງແຜນການຈັດຕັ້ງປະຕິບັດກ່ຽວກັບວຽກງານການເງິນໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນ.



ປະຖົມນິເທດ ວຽກງານການເງິນ

**ທ່ານ ສິມສະຫວາດ ພົງສາ, ຫົວໜ້າກົມ ສື່ມວນຊົນ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

"ຈຸດປະສົງຂອງໂຄງການກໍແມ່ນເພື່ອເປັນການຮັບປະກັນໃຫ້ແກ່ທຸກຄົນສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ປົກປ້ອງສິດ, ເສລີພາບຂັ້ນພື້ນຖານ ໂດຍສອດຄ່ອງກັບກົດໝາຍແຫ່ງຊາດ ແລະ ສົນທິສັນຍາສາກົນ ດັ່ງທີ່ໄດ້ລະບຸໄວ້ໃນເປົ້າໝາຍການພັດທະນາແບບຍືນຍົງ. ໂຄງການນີ້ຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ກັບນັກຂ່າວຍິງ ແລະ ຊາຍ ດ້ວຍການຍົກລະດັບທັກສະວິຊາຊີບ ລວມທັງການສ້າງຄວາມສາມາດທາງດ້ານດິຈິຕອນ, ເຄື່ອງມືເຕັກໂນໂລຊີ ແລະ ການຜະລິດເນື້ອໃນສື່ມວນຊົນ ຂໍ້ມູນຂ່າວສານທີ່ເປັນມືອາຊີບກ່ຽວກັບບັນຫາຂອງການພັດທະນາແບບຍືນຍົງ."




ຄຳປາໄສ ທ່ານ ສິມສະຫວາດ ພົງສາ ທີ່ງານເຊັນບົດບັນທຶກຄວາມເຂົ້າໃຈ ຂອງໂຄງການ ແກມຊິວ



ຄຳປາໄສ ທ່ານ ນາງ ອີນາ ມາຊິວລີໂອນີແຕ ທີ່ງານເຊັນບົດບັນທຶກຄວາມເຂົ້າໃຈ ຂອງ ໂຄງການ ແກມຊິວ

**ທ່ານ ນາງ ອີນາ ມາຊິວລີໂອນີແຕ, ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈຳ ສປປ ລາວ**

"ໂຄງການນີ້ເປັນການພິສູດໃຫ້ເຫັນເຖິງຫຼັກໝັ້ນຮ່ວມຂອງພວກເຮົາທີ່ມີຕໍ່ປະຊາຊົນລາວ. ຜ່ານຂໍ້ລິເລີ່ມນີ້, ພວກເຮົາໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ນັກຂ່າວ ແລະ ສະມາຊິກໃນສັງຄົມ ເພື່ອກາຍເປັນຜູ້ຊະນະໃນການພັດທະນາສີຂຽວ ແລະ ການລາຍງານທີ່ມີຄວາມຮັບຜິດຊອບ. ພວກເຮົາເຊື່ອວ່າໂດຍການສະໜັບສະໜູນນັກຂ່າວ ແລະ ຜູ້ນຳພາໃນສັງຄົມ, ພວກເຮົາບໍ່ພຽງແຕ່ສະໜອງຂໍ້ມູນທີ່ມີຄຸນະພາບໃຫ້ແກ່ປະຊາຊົນເທົ່ານັ້ນ ແຕ່ຍັງເປັນການສົ່ງເສີມຄວາມເປັນເຈົ້າຂອງ ແລະ ຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມຂອງພວກເຮົາ. ຮ່ວມກັນ, ພວກເຮົາກຳລັງສ້າງອະນາຄົດທີ່ສົດໃສ, ຍືນຍົງຫຼາຍສຳລັບທຸກຄົນ."

## ທ່ານທ່ານ ສະຫວັນຄອນ ຣາຊມົນຕຣີ, ປະທານສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອະດີດຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

“ປັດຈຸບັນ ສື່ອອນລາຍໄດ້ກາຍເປັນເລື່ອງປະຈຳວັນທີ່ຂາດບໍ່ໄດ້ທີ່ຕ້ອງໄດ້ນຳໃຊ້ຢູ່ເລື້ອຍໆ ເພາະມັນໄດ້ຖືກບັນຈຸ ແລະ ສາມາດນຳໃຊ້ໄດ້ຢູ່ໃນອຸປະກອນສື່ສານອັນດຽວ ໂດຍສະເພາະແມ່ນໂທລະສັບມືຖື. ຂ້າພະເຈົ້າເຊື່ອໝັ້ນວ່າ ໂຄງການນີ້ ຈະມີຜົນດີຕໍ່ທັງຜູ້ໃຫ້ບໍລິການ ແລະ ຜູ້ບໍລິໂພກສື່ໃນຍຸກດິຈິຕອນນີ້ ແລະ ໂຄງການນີ້ຕາມແຜນການຂອງ ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແມ່ນຈະໄດ້ຮັບການປະຕິບັດຮ່ວມກັນຈົນຮອດປີ 2027.”


ຄຳປາໄສ ທ່ານ ສະຫວັນຄອນ ຣາຊມົນຕຣີ ທີ່ງານເຊັນບົດບັນທຶກຄວາມເຂົ້າໃຈຂອງໂຄງການ ແກມຊິວ


ຄຳປາໄສ ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ ທີ່ງານເຊັນບົດບັນທຶກຄວາມເຂົ້າໃຈຂອງ ໂຄງການ ແກມຊິວ

## ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ, ອຳນວຍການ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ

“ອົງການແຄຣ໌ ຈະເຮັດວຽກຮ່ວມກັບນັກຂ່າວເພື່ອແລກປ່ຽນຄວາມເຂົ້າໃຈທີ່ກວ້າງຂວາງກ່ຽວກັບທັດສະນະຂອງຊຸມຊົນທາງເພດ ກ່ຽວກັບບັນຫາສີຂຽວທີ່ໄດ້ປະເຊີນ ແລະ ກ້າວໄປເຖິງການຮ່ວມມືໃນການຜະລິດຂໍ້ມູນຂ່າວສານສື່ມວນຊົນທີ່ມີຄວາມສົມດູນ ແລະ ສ້າງສັນ ທີ່ສົ່ງເສີມຄວາມໂປ່ງໃສ, ບໍ່ເປັນອັນຕະລາຍ ແລະ ສ້າງຜົນປະໂຫຍດສູງສຸດ ສຳລັບ ສປປ ລາວ.”



LAO.Info@care.org
@careinlaos
careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ